ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຈັດຕັ້ງເຜີຍແຜ່ດຳລັດວ່າດ້ວຍການເງິນ ແລະ ການບັນຊີ ຂອງ ທຫລ



ໃນວັນທີ 27 ສິງຫາ 2021 ທີ່ຜ່ານມານີ້, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງເຜີຍແຜ່ລຳລັດວ່າດ້ວຍການບັນຊີ ແລະ ການເງິນ ຂອງ ທຫລ ຂຶ້ນ ຢູ່ທີ່ສະໂມສອນສະຖາບັນການທະນາຄານ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງ ທ່ານ ໄຊລືຊາ ຜຸຍຍະວົງ ພ້ອມນີ້, ກໍ່ມີຄະນະກົມ, ຄະນະພະແນກ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງພາຍໃນ ທຫລ ເຂົ້າຮ່ວມ.

ການຈັດຕັ້ງເຜີຍແຜ່ດຳລັດວ່າດ້ວຍການເງິນ ແລະ ການບັນຊີ ຂອງ ທຫລ ເທື່ອນີ້ ແມ່ນເພື່ອເຮັດໃຫ້ບັນດາກົມພາຍໃນ ແລະ ອ້ອມຂ້າງ ທຫລ ມີຄວາມເຂົ້າໃຈກ່ຽວກັບວຽກງານດັ່ງກ່າວຫຼາຍຂຶ້ນ ເຊິ່ງມັນຈະຊ່ວຍໃຫ້ແຕ່ລະພາກສ່ວນພາຍໃນ ທຫລ ສາມາດສັງລວມ ແລະ ຂຶ້ນແຜນງົບປະມານຂອງຕົນໄດ້ຢ່າງຖືກຕ້ອງ ແລະ ສອດຄ່ອງກັບລະບຽບການຫຼາຍຂຶ້ນ ເຊິ່ງທ່ານ ນ ສອນນາລີ ພົມມາໄຊ ຮອງຫົວໜ້າກົມບັນຊີແລະການເງິນ ກໍ່ໄດ້ນຳສະເໜີພາບລວມ , ເນື້ອໃນ ແລະ ເປົ້າໝາຍໃນການສ້າງນິຕິກຳສະບັບນີ້ຂຶ້ນມາຢ່າງລະອຽດ ພ້ອມທັງການປະຕິບັດຕາມຂໍກຳນົດຂອງດຳລັດສະບັບດັ່ງກ່າວວາງອອກ ເພື່ອເຮັດໃຫ້ການສ້າງບົດລາຍງານທາງການເງິນ ມີຄວາມເປັນເອກະພາບ, ເຂົ້າໃຈງ່າຍ ແລະ ສາມາດກວດສອບໄດ້ຢ່າງມີປະສິດທິພາບ.

ດຳລັດວ່າດ້ວຍການເງິນ ແລະ ການບັນຊີ ແມ່ນຖືກສ້າງຂຶ້ນມາປ່ຽນແທນດຳລັດວາດ້ວຍການບັນຊີ ຂອງ ທຫລ ແລະ ສະຖາບັນການເງິນທີ່ຂຶ້ນກັບ ທຫລ ສະບັບເລກທີ 03/ນຍ ລົງວັນທີ 8 ມັງກອນ 1996 ເຊິ່ງເປັນນິຕິກຳທີ່ນຳໃຊ້ມາຍາວນານ; ໃນດຳລັດສະບັບໃໝ່ນີ້ ປະກອບມີ 7 ພາກ ລວມມີ 52 ມາດຕາ ໂດຍມີຈຸດປະສົງ ເພື່ອຄຸ້ມຄອງ ແລະ ຕິດຕາມກວດກາວຽກງານການເງິນ ແລະ ການບັນຊີ ຂອງ ທຫລ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ສ້າງຄວາມເຂັ້ມແຂງທາງດ້ານການເງິນ ຮັບປະກັນການປະຕິບັດພາລະບົດບາດຂອງຕົນ ທີ່ກຳນົດໄວ້ໃນກົດໝາຍ.

ການຈັດຕັ້ງເຜີຍແຜ່ດຳລັດສະບັບດັ່ງກ່າວ ແມ່ນໃຊ້ເວລາເຄິ່ງວັນ.





# ຂ່າວ-ພາບ: ສົມອິກ ເຄນຄຳແພງ

*ໃຊ້ເງິນກີບທົ່ວທັງຊາດ ສ້າງບົດບາດ ຄ່າເງິນລາວ*